# ປຶ້ມຄູ່ມືແນະນຳ
# ກ່ຽວກັບ
# ການນຳໃຊ້ທີ່ປຶກສາ ໂດຍທະນາຄານພັດທະນາອາຊີ(ADB)
# ແລະຜູ້ກູ້ຢືມຈາກທະນາຄານພັດທະນາອາຊີ

**Asian Development Bank (ADB)**
**ທະນາຄານພັດທະນາອາຊີ**

ເມສາ 2002

ປື້ມຄູ່ມືແນະນຳຫົວນີ້ແມ່ນແປມາຈາກ Guidelines on the use of consultants by Asian Development Bank and Its Borrowers ຊຶ່ງໄດ້ຈັດພິມໃນເດືອນເມສາ ປີ2002 –ໂດຍທະນາຄານພັດທະນາອາຊີ (ADB) ຖ້າຂໍ້ມູນໃດຍັງບໍ່ຈະແຈ້ງໃນປື້ມຄູ່ມືແນະນຳຫົວນີ້ໃຫ້ອ້າງອີງໃສ່ເອກກະສານເປັນພາສາອັງກິດທີ່ໄດ້ກ່າວມານັ້ນເພື່ອເປັນບ່ອນອີງ.

ບົດແນະນຳ ກ່ຽວກັບການນຳໃຊ້ທີ່ປຶກສາ ໂດຍທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ທີ່ຢູ່ໃນປື້ມຄູ່ມືສະບັບນີ້ ແມ່ນ ປ່ຽນແທນ ບົດແນະນຳ ກ່ຽວກັບການນຳໃຊ້ທີ່ປຶກສາ ໂດຍທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ທີ່ປະກາດໃຊ້ ໃນເດືອນກຸມພາ ປີ1968 ແລະດັດແກ້ໃນເວລາຕໍ່ມາໃນເດືອນພຶດສະພາ ປີ 1973, ເມສາ ປີ 1979 ແລະຕຸລາ ປີ 1998.

## ສາລະບານ


ໜ້າ

I. ບົດແນະນຳ 1

II. ການນຳໃຊ້ທີ່ປຶກສາໂດຍ ທະນາຄານພັດທະນາອາຊີ 3

III. ການນຳໃຊ້ທີ່ປຶກສາໂດຍ ຜູ້ກູ້ຢືມຈາກທະນາຄານພັດທະນາອາຊີ 4

IV. ການນຳໃຊ້ທີ່ປຶກສາພາຍໃນປະເທດ ແລະທີ່ປຶກສາທີ່ມາຈາກ ປະເທດສະມາຊິກກຳລັງພັດທະນາ 4

V . ການບໍລິການຂອງບໍລິສັດທີ່ປຶກສາ 5

(1) ຄວາມຮັບຜິດຊອບທົ່ວໄປ ຂອງບໍລິສັດທີ່ປຶກສາ 5

(2) ບໍລິສັດວິສະວະກຳທີ່ຕິດພັນກັບຜູ້ຮັບເໝົາ ຫຼືຜູ້ຜະລິດ 6

(3) ຄວາມຕໍ່ເນື່ອງຂອງການບໍລິການທີ່ປຶກສາ 7

VI. ຂັ້ນຕອນສຳລັບການເລືອກບໍລິສັດທີ່ປຶກສາ 7

(1) ບົດແນຳ 7

(2) ການກຳນົດໜ້າວຽກ 7

(3) “ການຄັດຈ້ອນລາຍຊື່” ຂອງບໍລິສັດທີ່ປຶກສາ 8

(4) ການເຊີນເຂົ້າຮ່ວມສະເໜີປະມູນ 9

(5) ການຮັບແລະປະເມີນເອກະສານຍື່ນປະມູນ 9

(6) ການເຈລະຈາສັນຍາ 11

(7) ຂັ້ນຕອນການຄັດເລືອກພິເສດ 11

VII. ສຳເນົາປະຫວັດບໍລິສັດທີ່ປຶກສາແລະບຸກຄົນທີ່ປຶກສາ ຂອງ ທະນາຄານພັດທະນາອາຊີ 12

VIII. ບຸກຄົນທີ່ປຶກສາ 12

(1) ປະເພດໜ້າທີ່ 12

(2) ຂັ້ນຕອນການຄັດເລືອກ 12

IX. ຂໍ້ກຳນົດ ອື່ນໆ 13

(1) ເວລາ ທີ່ໃຊ້ ສຳລັບການຄັດເລືອກ ແລະ ຮັບເອົາທີ່ປຶກສາ 13

(2) ຂໍ້ສະເໜີແນະ ຂອງທີ່ປຶກສາ 14

(3) ການຢຸດຕິສັນຍາ 14

# I. ບົດແນະນຳ

1.01. (ກ) ທະນາຄານພັດທະນາອາຊີ (ເອດີບີ) ໄດ້ນຳໃຊ້ການບໍລິການຂອງທີ່ປຶກສາ, ທັງແບບບຸກຄົນ ແລະບໍລິສັດ, ໃນດ້ານຕ່າງໆ ເພື່ອປະຕິບັດໂຄງການທີ່ ເອດີບີ ເປັນຜູ້ໃຫ້ທຶນ. ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ຕ້ອງການການຊ່ອຍເຫຼືອຂອງທີ່ປຶກສາ ເພື່ອຮັບປະກັນໃຫ້ມີ ປະສິດທິພາບແລະປະສິດທິຜົນທາງດ້ານເສດຖະກິດສູງສຸດ ໃນການກະກຽມ, ກໍ່ສ້າງ ແລະດຳເນີນງານໂຄງການຕ່າງໆ ແລະໃນການປະຕິບັດບັນດາວຽກງານທີ່ພົວພັນກັບໂຄງການ. ຈະສາມາດບັນລຸປະສິດທິພາບແລະປະສິດທິຜົນດ້ານເສດຖະກິດໄດ້ໂດຍຜ່ານການວາງແຜນ, ການອອກແບບແລະການຊີ້ນຳກວດກາຢ່າງເອົາໃຈໃສ່ ແລະມັນມີຄວາມສຳຄັນທີ່ຕ້ອງໃຊ້ການບໍລະການຂອງທີ່ປຶກສາເພື່ອບັນລຸຈຸດປະສົງດັ່ງກ່າວໃນກໍລະນີທີ່ຈຳເປັນ. ທີ່ປຶກສາທີ່ ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານຈະຈ້າງຕ້ອງມີຄວາມສາມາດຄົບຖ້ວນສຳລັບວຽກທີ່ຈະມອບໝາຍໃຫ້ເຮັດ.

(ຂ) ສະນັ້ນຄຸນນະວຸດທາງດ້ານວິຊາການຂອງທີ່ປຶກສາທີ່ຈະປະຕິບັດການ ບໍລິການທີ່ຕ້ອງການຈຶ່ງແມ່ນ ເງື່ອນໄຂທີ່ສຳຄັນທີ່ສຸດໃນການເລືອກທີ່ປຶກສາໂດຍທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ. ໂດຍຂຶ້ນກັບເງື່ອນໄຂຄວາມຕ້ອງການດັ່ງກ່າວ, ທະນາຄານພັດທະນາອາຊີ ຈະຮັບປະກັນໃຫ້ທີ່ປຶກສາທີ່ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ນຳໃຊ້ ນັ້ນມາຈາກບັນດາປະເທດສະມາຊິກໃນລັກສະນະທີ່ດຸ່ນດ່ຽງກັນພໍສົມຄວນ. ນອກນັ້ນຍັງແມ່ນນະໂຍບາຍຂອງເອດີບີ ທີ່ຢາກຊຸກຍູ້ໃຫ້ມີການນຳໃຊ້ທີ່ປຶກສາທີ່ມາຈາກປະເທດສະມາຊິກທີ່ກຳລັງພັດທະນາແລະເພື່ອເປັນການສົ່ງເສີມອາຊີບຂອງທີ່ປຶກສາພາຍໃນປະເທດ.

1.02. ປື້ມຄູ່ມືນີ້ໄດ້ວາງນະໂຍບາຍແລະຂັ້ນຕອນທົ່ວໄປກ່ຽວກັບການນຳໃຊ້ທີ່ປຶກສາໂດຍທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ. ຂໍ້ກຳນົດທີ່ຢູ່ໃນບົດແນະນຳເຫຼົ່ານີ້ ແມ່ນໃຊ້ກັບທຸກກໍລະນີທີ່ທະນາຄານພັດທະນາອາຊີ ນຳໃຊ້ທີ່ປຶກສາໃນການເຄື່ອນໄຫວຂອງຕົນ. ຂໍ້ກຳນົດເຫຼົ່ານີ້ຍັງຕ້ອງໃຊ້ກັບທຸກກໍລະນີທີ່ຜູ້ກູ້ຢືມຈາກທະນາຄານ ນຳໃຊ້ທີ່ປຶກສາໃນໂຄງການທີ່ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ, ນອກຈາກໃນກໍລະນີທີ່ທະນາຄານພັດທະນາອາຊີໄດ້ຕົກລົງໄວ້ເປັນຢ່າງອື່ນ. ປື້ມຄູ່ມືນີ້ ມີການດັດແກ້ ບົດແນະນຳສະບັບກ່ອນໆ.

1.03. ທີ່ປຶກສາທີ່ທະນາຄານພັດທະນາອາຊີ ຫຼື ຜູ້ກູ້ຢືມຈາກທະນາຄານຈະຈ້າງອາດແມ່ນບຸກຄົນທີ່ປຶກສາ ຫຼື ບໍລິສັດທີ່ປຶກສາ,ຊຶ່ງກໍ່ແລ້ວແຕ່ສະຖານະການ. ໄດ້ມີການເວົ້າເຖິງການໄຈ້ແຍກລະຫວ່າງການນຳໃຊ້ "ບຸກຄົນທີ່ປຶກສາ" ແລະ "ບໍລິສັດທີ່ປຶກສາ" ຂຶ້ນກັບວ່າການຄັດເລືອກທີ່ປຶກສາສຳລັບວຽກໃດນຶ່ງນັ້ນ ແມ່ນອີງໃສ່ ຄຸນນະວຸດແລະປະສົບປະການຂອງບຸກຄົນທີ່ເປັນຊ່ຽວຊານທີ່ຈະຈ້າງ ຫຼື ອີງໃສ່ ຄວາມສາມາດ ແລະປະສົບປະການຂອງບໍລິສັດທີ່ປຶກສາທີ່ຈະຈ້າງແລະບັນດາພະນັກງານແລະສິ່ງອຳນວຍຄວາມສະດວກທີ່ບໍລິສັດຈະສະໜອງໃຫ້. ບຸກຄົນທີ່ປຶກສາ ໃນກໍລະນີນີ້ ອາດຈະຖືກວ່າຈ້າງໂດຍກົງ ຫຼືຜ່ານອົງການຈັດຕັ້ງໃດນຶ່ງ (ເບິ່ງວັກ 8.05).

1.04. ທີ່ປຶກສາທີ່ທະນາຄານພັດທະນາອາຊີຈະຈ້າງຈາກແຫຼ່ງທຶນປົກກະຕິຂອງທະນາຄານ ຕ້ອງວ່າຈ້າງມາຈາກປະເທດສະມາຊິກ ຂອງທະນາຄານພັດທະນາອາຊີໃດນຶ່ງກໍໄດ້. ທີ່ປຶກສາທີ່ທະນາ

ຄານພັດທະນາອາຊີ ຈະຈ້າງໂດຍໃຊ້ເງິນຈາກແຫຼ່ງທຶນພິເສດຂອງຕົນ ຕ້ອງວ່າງຈ້າງມາຈາກປະເທດທີ່ໄດ້ຮັບສິດທີ່ທາງທະນາຄານພັດທະນາອາຊີ ໄດ້ກຳນົດໄວ້ເປັນແຕ່ລະໄລຍະ.

1.05. ມັນແມ່ນນະໂຍບາຍຂອງທະນາຄານພັດທະນາອາຊີ ທີ່ຮຽກຮ້ອງໃຫ້ຜູ້ກູ້ຢືມ (ລວມທັງຜູ້ໄດ້ຮັບຜົນປະໂຫຍດຈາກເງິນກູ້ຂອງທະນາຄານພັດທະນາອາຊີ) ແລະທີ່ປຶກສາພາຍໃຕ້ສັນຍາທີ່ທະນາຄານພັດທະນາອາຊີເປັນຜູ້ໃຫ້ເງິນ ຕ້ອງໄດ້ປະຕິບັດມາດຕະຖານຈັນຍາທຳທີ່ສູງສຸດ ໃນໄລຍະຂັ້ນຕອນການຄັດເລືອກ ແລະປະຕິບັດສັນຍາດັ່ງກ່າວ. ໃນການປະຕິບັດນະໂຍບາຍນີ້, ທະນາຄານພັດທະນາອາຊີ ໄດ້:

(ກ) ເພື່ອຈຸດປະສົງຂອງຂໍ້ກຳນົດນີ້, ນິຍາມຄຳເວົ້າທີ່ໃຊ້ໄວ້ຂ້າງລຸ່ມດັ່ງນີ້:

(i) "ການປະຕິບັດທີ່ສໍ້ລາດບັງຫຼວງ" ໝາຍເຖິງພຶດຕິກຳ ຂອງເຈົ້າໜ້າທີ່ຂອງລັດ ຫຼື ພາກສ່ວນເອກະຊົນທີ່ສ້າງຄວາມຮັ່ງມີໃຫ້ຕົນເອງ ແລະ/ຫຼືຜູ້ໃກ້ສິດຂອງຕົນ ແບບບໍ່ເໝາະສົມແລະບໍ່ຖືກຕ້ອງຕາມກົດໝາຍ, ຊັກນຳໃຫ້ຜູ້ອື່ນເຮັດແບບກ່າວມານີ້, ໂດຍການໃຊ້ຕຳແໜ່ງໜ້າທີ່ໃນທາງທີ່ຜິດ, ແລະມັນລວມທັງການສະເໜີ, ການໃຫ້, ການຮັບ ຫຼືການຮ່ວມມື ຮັບເອົາສິ່ງທີ່ມີຄ່າທີ່ຈະມີອິດທິພົນຕໍ່ການປະຕິບັດຂອງເຈົ້າໜ້າດັ່ງກ່າວໃນຂັ້ນຕອນການຄັດເລືອກ ຫຼືໃນການປະຕິບັດສັນຍາ;

(ii) " ການປະຕິບັດທີ່ສໍ້ໂກງ" ໝາຍເຖິງການບິດເບືອນຄວາມຈິງສະເໜີຄວາມເທັດເພື່ອສ້າງອິດທິພົນຕໍ່ຂັ້ນຕອນການຄັດເລືອກ ຫຼືການປະຕິບັດສັນຍາຊຶ່ງເຮັດໃຫ້ຜູ້ກູ້ຢືມໄດ້ຮັບຜົນເສຍຫາຍ, ແລະອັນນີ້ລວມມີການປະຕິບັດແບບຮ່ວມຫົວກັນສໍ້ໂກງຂອງທີ່ປຶກສາ(ກ່ອນແລະຫຼັງການຍື່ນຂໍ້ສະເໜີປະມູນ)ເພື່ອເຮັດໃຫ້ກູ້ຢືມເສຍຜົນປະໂຫຍດຈາກການແຂ່ງຂັນແບບເສລີແລະເປີດກ້ວາງ.

(ຂ) ຈະປະຕິເສດ ຂໍ້ສະເໜີເພື່ອໃຫ້ວ່າຈ້າງທີ່ປຶກສາ ຖ້າຫາກພົບວ່າທີ່ປຶກສາທີ່ຖືກສະເໜີໃຫ້ໄດ້ຮັບຈ້າງນັ້ນໄດ້ມີສ່ວນຮ່ວມໃນການສໍ້ລາດບັງຫຼວງ ຫຼື ສໍ້ໂກງໃນການແຂ່ງຂັນກັນເພື່ອໃຫ້ໄດ້ຮັບສັນຍາດັ່ງກ່າວ.

(ຄ) ຈະຍົກເລີກ ສ່ວນຂອງທຶນກູ້ຢືມທີ່ເປັນງົບປະມານສຳລັບສັນຍາຈ້າງການບໍລິການທີ່ປຶກສາ ຖ້າຫາກທະນາຄານພັດທະນາອາຊີພົບວ່າ ຜູ້ຕາງໜ້າຂອງຜູ້ກູ້ຢືມ ຫຼື ຂອງຜູ້ໄດ້ຮັບຜົນປະໂຫຍດຈາກທຶນກູ້ຢືມ ໄດ້ມີການສໍ້ລາດບັງຫຼວງ ຫຼື ສໍ້ໂກງໃນລະຫວ່າງຂັ້ນຕອນການຄັດເລືອກ ຫຼື ໃນລະຫວ່າງການປະຕິບັດສັນຍາ ໂດຍທີ່ຜູ້ກູ້ຢືມບໍ່ໄດ້ມີມາດຕະການແກ້ໄຂ ສະພາບຢ່າງທັນການແລະເໝາະສົມໃຫ້ເປັນທີ່ພໍໃຈຂອງທະນາຄານພັດທະນາອາຊີ.

(ງ) ຈະປະກາດວ່າທີ່ປຶກສາບໍ່ມີຄວາມເໝາະສົມທີ່ຈະໄດ້ຮັບການວ່າຈ້າງເຮັດສັນຍາທີ່ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ ຖ້າຫາກບໍ່ວ່າຍາມໃດກໍຕາມມີການພົບວ່າ ທີ່ປຶກສາມີການ

ຂີ້ລັກສໍ້ໂກງໃນການແຂ່ງຂັນປະມູນສັນຍາ ຫຼືໃນການປະຕິບັດສັນຍາຂອງທະນາຄານພັດທະນາອາຊີ, ອາດຈະແມ່ນແບບບໍ່ມີກຳນົດຫຼືໃນໄລຍະທີ່ກຳນົດ.

(ຈ) ໃນສັນຍາທີ່ໄດ້ຮັບທຶນຈາກເງິນກູ້ຂອງທະນາຄານພັດທະນາອາຊີ, ທະນາຄານພັດທະນາອາຊີ ມີສິດທີ່ຈະຮຽກຮ້ອງ ໃຫ້ມີຂໍ້ກຳນົດໃນສັນຍາ ທີ່ຮຽກຮ້ອງໃຫ້ທີ່ປຶກສາ ອະນຸຍາດ ໃຫ້ ທະນາຄານພັດທະນາອາຊີ ກວດສອບ ບັນຊີແລະເອກະສານບັນທຶກຕ່າງໆຂອງຕົນທີ່ພົວພັນກັບການປະຕິບັດສັນຍາ ແລະໃຫ້ຜູ້ກວດສອບບັນຊີທີ່ ທະນາຄານພັດທະນາອາຊີແຕ່ງຕັ້ງສາມາດກວດສອບບັນຊີແລະເອກະສານເຫຼົ່ານັ້ນໄດ້.

1.06. ໂດຍມີການຕົກລົງສະເພາະກັບ ທະນາຄານພັດທະນາອາຊີ, ຜູ້ກູ້ຢືມອາດບັນຈຸຂໍ້ກຳນົດເຂົ້າໃນເອກະສານເຊີນປະມູນສຳລັບສັນຍາໃຫຍ່ໆທີ່ ທະນາຄານພັດທະນາອາຊີເປັນຜູ້ໃຫ້ທຶນ ຊຶ່ງກຳນົດໃຫ້ທີ່ປຶກສາ ຕ້ອງປະຕິບັດກົດໝາຍຂອງປະເທດກ່ຽວກັບການສໍ້ລາດບັງຫຼວງ ແລະການສໍ້ໂກງ (ລວມທັງການໃຫ້ສິນບົນ) ໃນການແຂ່ງຂັນປະມູນສັນຍາແລະໃນການປະຕິບັດສັນຍາ ດັ່ງທີ່ໄດ້ບົ່ງໄວ້ໃນເອກະສານເຊີນປະມູນ. ຕ້ອງໄດ້ມີການໝາຍເຫດໄວ້ຂ້າງລຸ່ມເອກະສານ ໃນກໍລະນີທີ່ມີການສອດແຊກຂໍ້ກຳນົດດັ່ງກ່າວເຂົ້າໂດຍລະບຸວ່າຜູ້ກູ້ຢືມໄດ້ຮຽກຮ້ອງໃຫ້ມີການເອົາຂໍ້ກຳນົດດັ່ງກ່າວເຂົ້າໃນເອກະສານ.

1.07. ໃນກໍລະນີທີ່ສັນຍາຈະໄດ້ຮັບທຶນທັງໝົດຫຼືສ່ວນນຶ່ງຈາກທະນາຄານພັດທະນາອາຊີ, ເອກະສານສັນຍາ ຕ້ອງມີຄຳປະຕິຍານໂດຍທີ່ປຶກສາວ່າ ຈະບໍ່ມີການ ໃຫ້ຫຼືການຮັບ ຄ່າທຳນຽມ, ເງິນໃຫ້ລ້າ, ຄ່າທົດແທນ,ຂອງຂັວນ, ຄ່ານາຍໜ້າ ຫຼືການຈ່າຍເງິນອື່ນທີ່ພົວພັນກັບຂັ້ນຕອນການຄັດເລືອກ ຫຼືການປະຕິບັດສັນຍາ, ນອກຈາກຈຳພວກທີ່ໄດ້ກຳນົດໄວ້ ໃນເອກະສານສະເໜີປະມູນ.

## II. ການນຳໃຊ້ທີ່ປຶກສາໂດຍ ທະນາຄານພັດທະນາອາຊີ

2.01. ທະນາຄານພັດທະນາອາຊີ ອາດນຳໃຊ້ທີ່ປຶກສາສຳລັບວຽກຕ່າງໆຂອງການຊ່ວຍເຫຼືອດ້ານວິຊາການທີ່ໃຊ້ທຶນຈາກແຫຼ່ງທຶນຂອງຕົນເອງ ຫຼື ເຖິງແມ່ນຈະໄດ້ຮັບທຶນຈາກສະຖາບັນອື່ນ ແຕ່ແມ່ນທະນາຄານພັດທະນາອາຊີເປັນຜູ້ບໍລິຫານໂຄງການຊ່ວຍເຫຼືອດ້ານວິຊາການໃນນາມສະຖາບັນອື່ນໆດັ່ງກ່າວ. ທະນາຄານພັດທະນາອາຊີ ອາດໃຊ້ທີ່ປຶກສາເພີ່ມເຕີມໃສ່ກັບພະນັກງານຕົນເອງໃນການດຳເນີນການເຄື່ອນໄຫວຂອງຕົນເອງ.ໃນເວລາ ທະນາຄານພັດທະນາອາຊີ ໃຊ້ທີ່ປຶກສາໃນກໍລະນີແບບນີ້, ທະນາຄານພັດທະນາອາຊີ ຈະເປັນຜູ້ເລືອກແລະວ່າຈ້າງທີ່ປຶກສາເອງ. ໜ້າທີ່ຂອງທີ່ປຶກສາຈະຖືກກຳນົດໃນການກຳນົດໜ້າວຽກ ຊຶ່ງ, ໃນກໍລະນີຂອງໂຄງການການຊ່ວຍເຫຼືອດ້ານວິຊາການ, ຈະຖືກຮ່າງຂຶ້ນໂດຍລົມທຶບກັບຜູ້ໄດ້ຮັບການຊ່ວຍເຫຼືອ (ເບິ່ງວັກ 6.02 (ຂ)ຂ້າງລຸ່ມນີ້).

2.02. ຫຼັງຈາກສຳເລັດສັນຍາຈ້າງແລ້ວ, ທີ່ປຶກສາດັ່ງກ່າວອາດຈະຖືກບໍ່ໃຫ້ເຮັດວຽກຕໍ່ມາໃນໂຄງການດຽວກັນໄດ້ອີກ, ຖ້າຫາກ ທະນາຄານພັດທະນາອາຊີ ຫາກຕັດສິນໃຈແບບນັ້ນ.

## III. ການນຳໃຊ້ທີ່ປຶກສາໂດຍ ຜູ້ກູ້ຢືມຈາກທະນາຄານພັດທະນາອາຊີ

3.01. ຜູ້ກູ້ຢືມຈາກທະນາຄານພັດທະນາອາຊີ ອາດນຳໃຊ້ທີ່ປຶກສາເພື່ອຊ່ວຍໃນການປະຕິບັດໂຄງການທີ່ໄດ້ຮັບທຶນຈາກ ທະນາຄານພັດທະນາອາຊີ. ຄວາມຕ້ອງການໃນການນຳໃຊ້ທີ່ປຶກສາໃນໂຄງການໃດນຶ່ງສະເພາະທີ່ທະນາຄານພັດທະນາອາຊີເປັນຜູ້ໃຫ້ທຶນນັ້ນ ຈະໄດ້ຮັບການພິຈາລະນາ ຢ່າງເອົາໃຈໃສ່ໂດຍທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມ ໃນເວລາທີ່ເຮັດການປະເມີນໂຄງການ ຫຼື ໃນເວລາຕໍ່ມາຕາມແຕ່ຄວາມຈຳເປັນຂອງສະພາບການ. ໃນກໍລະນີຈຳເປັນ, ທະນາຄານພັດທະນາອາຊີ ອາດຮຽກຮ້ອງໃຫ້ຜູ້ກູ້ຢືມນຳໃຊ້ທີ່ປຶກສາ.

3.02. (ກ) ໃນກໍລະນີທີ່ຜູ້ກູ້ຢືມນຳໃຊ້ທີ່ປຶກສາ, ຜູ້ກູ້ຢືມຕ້ອງຮັບຜິດຊອບໃນການຄັດເລືອກ, ວ່າຈ້າງ ແລະຊີ້ນຳກວດກາ ທີ່ປຶກສາ. ຢ່າງໃດກໍຕາມ, ທະນາຄານພັດທະນາອາຊີ ຕ້ອງມີຄວາມພໍໃຈວ່າໃຫ້ມີການກຳນົດໜ້າທີ່ແລະຄວາມຮັບຜິດຊອບໃຫ້ທີ່ປຶກສາ ຢ່າງພຽງພໍ ແລະໃຫ້ ທີ່ປຶກສາມີຄວາມສາມາດສຳລັບໜ້າທີ່ທີ່ຈະເຮັດ, ໃຫ້ ເງື່ອນໄຂ ຂອງສັນຍາເປັນທີ່ ພໍໃຈ ແລະໃຫ້ມີການປະຕິບັດສັນຍາຢ່າງຖືກຕ້ອງເໝາະສົມ.

(ຂ) ເພື່ອບັນລຸເປົ້າໝາຍດັ່ງກ່າວ, ທະນາຄານພັດທະນາອາຊີ ອາດຈະມີການປຶກສາຫາລືກັບຜູ້ກູ້ຢືມ ແລະທີ່ປຶກສາ. ຖ້າຫາກຜູ້ກູ້ຢືມຮ້ອງຂໍ, ທະນາຄານພັດທະນາອາຊີ ຈະອະນຸຍາດໃຫ້ພະນັກງານຂອງຕົນ ເຂົ້າຮ່ວມແລະຊ່ອຍເຫຼືອໃນການເຈລະຈາສັນຍາກັບທີ່ປຶກສາ. ໃນລະຫວ່າງການປຶກສາຫາລືດັ່ງກ່າວ, ທະນາຄານພັດທະນາອາຊີ ຈະບົ່ງຈະແຈ້ງທຸກໆຄວາມຕ້ອງການທີ່ຕົນອາດມີກ່ຽວກັບວຽກ ແລະຕ້ອງໃຫ້ມີຄວາມພໍໃຈວ່າຜູ້ກູ້ຢືມ ຈະໃຫ້ສິດພຽງພໍແກ່ທີ່ປຶກສາເພື່ອເຮັດສຳເລັດຄວາມຮັບຜິດຊອບຂອງເຂົາເຈົ້າ ແລະເພື່ອປະຕິບັດຕາມເງື່ອນໄຂຂອງສັນຍາ.

(ຄ) ໂດຍປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂອງວັກນີ້, ການມີສ່ວນຮ່ວມຂອງທະນາຄານພັດທະນາອາຊີ ໃນການເລືອກ ແລະວ່າຈ້າງທີ່ປຶກສາຈະໄດ້ຮັບການກຳນົດຢ່າງລະອຽດໃນແຕ່ລະກໍລະນີໂດຍການຕົກລົງກັນລະຫວ່າງ ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານພັດທະນາອາຊີ.

## IV. ການນຳໃຊ້ທີ່ປຶກສາພາຍໃນປະເທດ ແລະທີ່ປຶກສາທີ່ມາຈາກປະເທດສະມາຊິກກຳລັງພັດທະນາ

4.01. ມັນແມ່ນນະໂຍບາຍຂອງ ທະນາຄານພັດທະນາອາຊີ ທີ່ຢາກສົ່ງເສີມໃຫ້ມີການນຳໃຊ້ທີ່ປຶກສາພາຍໃນປະເທດ ແລະທີ່ປຶກສາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ ຖ້າເຫັນວ່າທີ່ປຶກສາເຫຼົ່ານັ້ນມີຄວາມສາມາດທີ່ຈະປະຕິບັດວຽກໄດ້.

4.02. ທີ່ປຶກສາທີ່ຈະຖືກພິຈາລະນາໃຊ້ໃນວຽກຄວນຕາງໜ້າມາຈາກບັນດາປະເທດສະມາຊິກໃຫ້ມີລັກສະນະທີ່ມີການດຸ່ນດ່ຽງກັນພໍສົມຄວນ (ເບິ່ງວັກ6.03 (ຂ) ແລະ8.06 ຂ້າງລຸ່ມນີ້). ພາຍໃຕ້ເງື່ອນໄຂດັ່ງກ່າວ, ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຂອງຕົນ ຄວນໃຫ້ການພິຈາລະນາພິເສດແກ່ການໃຊ້ທີ່ປຶກສາພາຍໃນປະເທດ ແລະທີ່ປຶກສາມາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ ເທົ່າທີ່ຈະສາມາດເປັນໄປໄດ້, ທັງນີ້ກໍຂຶ້ນກັບ ຄຸນນະວຸດດ້ານວິຊາການທີ່ຕ້ອງການແລະມາດຕະຖານທີ່ສາມາດຕອບສະໜອງໄດ້.

4.03. (ກ) ຊຸກຍູ້ໃຫ້ບໍລິສັດທີ່ປຶກສາທີ່ມາຈາກປະເທດສະມາຊິກທີ່ພັດທະນາແລ້ວ ທີ່ຖືກເຊີນໃຫ້ສະເໜີປະມູນປະຕິບັດວຽກ ໃຫ້ສົມທົບກັບ ທີ່ປຶກສາພາຍໃນປະເທດ ຫຼືທີ່ປຶກສາທີ່ມາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ ທີ່ສາມາດສະໜອງສ່ວນນຶ່ງຂອງການບໍລິການທີ່ຕ້ອງການ. ໃນກໍລະນີທີ່ທຸກປັດໄຈອື່ນໆທີ່ມີຜົນຕໍ່ການປະເມີນໄດ້ຮັບຄະແນນເທົ່າກັນ, ໃນການປະເມີນການສະເໜີປະມູນ, ຈະມີການໃຫ້ສິດພິເສດແກ່ບໍລິສັດທີ່ມີການຈັດການສົມທົບກັນດັ່ງກ່າວ ກໍຄືໃຫ້ແກ່ທີ່ປຶກສາພາຍໃນປະເທດ ຫຼື ບໍລິສັດທີ່ປຶກສາທີ່ມາຈາກປະເທດສະມາຊິກກຳລັງພັດທະນາທີ່ໄດ້ຍື່ນສະເໜີປະມູນຕາມລຳພັງ.

(ຂ) ໃນບັນດາໂຄງການທີ່ມີຄວາມເປັນໄປໄດ້ທີ່ຈະມີການສົມທົບກັນລະຫວ່າງທີ່ປຶກສາພາຍໃນປະເທດແລະບໍລິສັດຕ່າງປະເທດ. ຜູ້ກູ້ຢືມຈາກທະນາຄານ ຫຼືອົງການທີ່ໄດ້ຮັບການຊ່ອຍເຫຼືອຄວນແຈ້ງໃຫ້ບໍລິສັດຕ່າງປະເທດທີ່ຖືກຄັດເລືອກ ແລະໃຫ້ທະນາຄານພັດທະນາອາຊີ ລາຍຊື່ຂອງທີ່ປຶກສາພາຍໃນປະເທດທີ່ເໝາະສົມພ້ອມຄຸນນະວຸດຂອງເຂົາເຈົ້າ ແລະຕ້ອງຮັບປະກັນໃຫ້ທຸກບໍລິສັດທີ່ຖືກຄັດເລືອກໄດ້ຮັບອະນຸຍາດໃຫ້ມີການຕົກລົງຮ່ວມງານກັບທີ່ປຶກສາພາຍໃນປະເທດເຫຼົ່ານີ້.

(ຄ) ໃນກໍລະນີທີ່ມີການຕົກລົງຮ່ວມມືກັນລະຫວ່າງບໍລິສັດທີ່ປຶກສາ ຈາກປະເທດສະມາຊິກທີ່ພັດທະນາແລ້ວ ກັບທີ່ປຶກສາພາຍໃນປະເທດ ຫຼືທີ່ປຶກສາມາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ, ຄວນມີການກຳນົດຢ່າງຈະແຈ້ງການບໍລິການຂອງທີ່ປຶກສາພາຍປະເທດ ຫຼືຂອງທີ່ປຶກສາ ມາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ ແລະຕ້ອງຂຽນລົງໃນການສະເໜີຍື່ນປະມູນແລະໃນສັນຍາ.

## V . ການບໍລິການຂອງບໍລິສັດທີ່ປຶກສາ

### (1) ຄວາມຮັບຜິດຊອບທົ່ວໄປ ຂອງບໍລິສັດທີ່ປຶກສາ

5.01. ການບໍລິການຕ່າງໆຂອງບໍລິສັດທີ່ປຶກສາ ທີ່ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ນຳໃຊ້ມັກຈະມີດັ່ງຕໍ່ໄປນີ້:

(1) ການສຶກສາກ່ອນການລົງທຶນ : ລວມມີການສຶກສາ ເພື່ອວາງບູລິມະສິດຂອງການລົງທຶນ ແລະນະໂຍບາຍຂອງຂະແໜງການ, ເພື່ອປະເມີນການດຳເນີນການແລະສະຖາບັນການຈັດຕັ້ງຕ່າງໆຂອງລັດຖະບານສຳລັບການປະຕິບັດໂຄງການ ແລະເພື່ອກຳນົດຄວາມເປັນໄປໄດ້ແລະຄວາມຖືກຕ້ອງຂອງໂຄງການລົງທຶນ;

(2) ວຽກວິສະວະກຳລະອຽດແລະການອອກແບບ ລວມທັງການກະກຽມອອກແບບລະອຽດ, ການວາງກຳນົດໝາຍ, ຄາດຄະເນມູນຄ່າໃຊ້ຈ່າຍ ແລະເອກະສານເຊີນປະມູນ;

(3) ການປະຕິບັດໂຄງການ: ລວມທັງການດູແລຊີ້ນຳການບໍລິຫານໂຄງການ, ການຊ່ອຍເຫຼືອໃນການດຳເນີນງານໂຄງການໃນໄລຍະຕົ້ນ, ການປະຕິບັດການຝຶກອົບຮົມ, ແລະການກໍ່ສ້າງທາງສະຖາບັນ ຫຼືການສຶກສາດ້ານການເງິນສຳລັບການປະຕິບັດໂຄງການໃຫ້ມີຜົນສຳເລັດ.

5.02. ການວ່າຈ້າງບໍລິສັດທີ່ປຶກສາ ຄວນອີງໃສ່ຄວາມເໝາະສົມຂອງຄຸນນະວຸດຂອງບໍລິສັດສໍາລັບວຽກແລະອີງໃສ່ຄວາມສາມາດຂອງເຂົາເຈົ້າທີ່ຈະສະໜອງການບໍລິການ (ລວມທັງຂໍ້ສະເໜີທີ່ຈະມີ ແລະການອອກແບບແລະກໍານົດໝາຍລະອຽດທີ່ຈະຂຽນຂຶ້ນ) ໃນລັກສະນະທີ່ເປັນກາງຢ່າງຈະແຈ້ງ ແລະຕ້ອງຖືກກັບຂໍ້ຮຽກຮ້ອງຂອງທະນາຄານພັດທະນາອາຊີ ໃນການປະມູນທີ່ມີການແຂ່ງຂັນກັນແບບສາກົນ.

5.03. ບໍລິສັດທີ່ປຶກສາທີ່ຖືກຈ້າງໃຫ້ ອອກແບບແລະກໍານົດລາຍອຽດຂັ້ນສຸດທ້າຍຕ້ອງຮັບຜິດຊອບຕໍ່ຄວາມຊັດເຈນແລະຄວາມເມາະສົມຂອງວຽກຂອງຕົນ. ການເຮັດສັນຍາກັບບໍລິສັດດັ່ງກ່າວຄວນມີການກໍານົດຢ່າງເໝາະສົມກ່ຽວກັບດ້ານນີ້. ບໍລິສັດທີ່ປຶກສາທີ່ຖືກຈ້າງສໍາລັບຈຸດປະສົງອື່ນຕາມທໍາມະດາ ຈະເປັນທີ່ປຶກສາໃຫ້ແກ່ຜູ້ກູ້ຢືມໃນທຸກບັນຫາດ້ານວິຊາການ ແລະຜູ້ກູ້ຢືມອາດຈະມອບສິດໃຫ້ສໍາລັບການເຮັດການຕັດສິນໃຈຂັ້ນສຸດທ້າຍພາຍໃນຂອບເຂດທີ່ກໍານົດໄວ້.

## (2) ບໍລິສັດວິສະວະກໍາທີ່ຕິດພັນກັບຜູ້ຮັບເໝົາ ຫຼືຜູ້ຜະລິດ

5.04. ໃນບັນດາປະເພດທີ່ປຶກສາ, ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານມັກຈະນໍາໃຊ້ບໍລິສັດທີ່ປຶກສາດ້ານວິສະວະກໍາ. ບໍລິສັດທີ່ປຶກສາດ້ານວິສະວະກໍາດັ່ງກ່າວຕາມທໍາມະດາຈະນອນຢູ່ໃນປະເພດດັ່ງຕໍ່ໄປນີ້:

(1) ບໍລິສັດຂອງວິສະວະກອນທີ່ປຶກສາອິດສະລະ;

(2) ບໍລິສັດທີ່ປະສົມປະສານໜ້າທີ່ຂອງວິສະວະກອນທີ່ປຶກສາແລະໜ້າທີ່ຂອງຜູ້ຮັບເໝົາ, ຫຼືຈໍາພວກທີ່ຕິດພັນກັບ ຫຼືຂຶ້ນກັບຜູ້ຮັບເໝົາ ຫຼື ຜູ້ຮັບເໝົາເປັນເຈົ້າຂອງເອງ;

(3) ບໍລິສັດວິສະວະກອນທີ່ປຶກສາທີ່ເປັນສາຂາຂອງຜູ້ຜະລິດ ຫຼືບໍລິສັດຜູ້ຜະລິດທີ່ມີພະແນກຫຼືຫ້ອງການອອກແບບທີ່ໃຫ້ການບໍລິການດ້ານທີ່ປຶກສາດ້ານວິສະວະກໍາ.

5.05. ຕາມທໍາມະດາຈະຍອມຮັບເອົາ ບໍລິສັດທີ່ນອນຢູ່ໃນປະເພດ (2) ແລະປະເພດ(3)ຂອງວັກ 5.04 ຂ້າງເທິງນີ້ໄດ້ ກໍຕໍ່ເມື່ອພວກເຂົາຍອມທີ່ຈະຈໍາກັດບົດບາດຂອງເຂົາເຈົ້າຢູ່ແຕ່ໃນວຽກວິສະວະກອນທີ່ປຶກສາເທົ່ານັ້ນແລະຈະຖືວ່າຕົນເອງ, ບໍລິສັດທີ່ຕິດພັນກັບຕົນແລະສາຂາບໍລິສັດທີ່ຂຶ້ນນໍາຕົນ ບໍ່ມີຄຸນສົມບັດໃນວຽກດ້ານອື່ນພາຍໃນໂຄງການດຽວກັນ(ລວມທັງການຍື່ນປະມູນສ່ວນໃດສ່ວນນຶ່ງຂອງໂຄງການ). ນອກຈາກນັ້ນ, ໃນກໍລະນີບໍລິສັດປະເພດ (3), ມັນມີຄວາມຈໍາເປັນທີ່ຕ້ອງຮັບປະກັນໃຫ້ກໍານົດໝາຍລາຍລະອຽດທີ່ພວກເຂົາເຈົ້າຈະເປັນຜູ້ຮ່າງຂຶ້ນໃນຖານະວິສະວະກອນທີ່ປຶກສາ ຕ້ອງມີລັກສະນະເປັນກາງບໍ່ເຂົ້າຂ້າງໃຜ ແລະສາມາດຕອບສະໜອງງເງື່ອນໄຂຂອງການປະມູນແບບມີການແຂ່ງຂັນກັນ, ບໍ່ວ່າຈະແມ່ນການປະມູນສາກົນຫຼືພາຍໃນປະເທດແລ້ວແຕ່ກໍລະນີ. ສະນັ້ນ, ມີພຽງແຕ່ໃນກໍລະນີພິເສດແລະມີການຢັ້ງຢືນຢ່າງຈະແຈ້ງ, ຫຼັງຈາກໄດ້ພິຈາລະນາລັກສະນະຂອງການບໍລິການທີ່ໄດ້ປະຕິບັດໃນຖານະທີ່ປຶກສາ ເທົ່ານັ້ນທີ່ ທາງນະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານຈະຕົກລົງຮ່ວມກັນ ໃນຂັ້ນຕອນກາຄັດເລືອກຄຸນສົມບັດເບື້ອງຕົ້ນ ທີ່ຈະອະນຸຍາດໃຫ້ບໍລິສັດປະເພດ (2) ແລະປະເພດ(3) ແລະບໍລິສັດຮ່ວມງານກັນແລະສາຂາຂອງເຂົາເຈົ້າ ເຂົ້າຮ່ວມຍື່ນປະມູນ, ບໍ່ວ່າຈະໃນຖານະຜູ້ຮັບເໝົາ ຫຼືຜູ້ສະໜອງສິນຄ້າແລະການບໍລິການ.

### (3) ຄວາມຕໍ່ເນື່ອງຂອງການບໍລິການທີ່ປຶກສາ

5.06. (ກ) ໜ້າທີ່ຂອງບໍລິສັດທີ່ປຶກສາ ແມ່ນຂຶ້ນກັບສະພາບແວດລ້ອມຂອງແຕ່ລະກໍລະນີ. ໜ້າທີ່ດັ່ງກ່າວອາດລວມມີໜົດທັງສາມປະເພດທີ່ກ່າວໃນຂໍ້ 5.01 ຂ້າງເທິງນີ້, ນັ້ນຄື: (I)ການສຶກສາກ່ອນການລົງທຶນ; (ii) ວຽກວິສະວະກຳແລະການອອກແບບລະອຽດ; ແລະ (iii) ການປະຕິບັດໂຄງການ. ຢ່າງໃດກໍຕາມ, ໃນບາງກໍລະນີ ການສຶກສາກ້ອນການລົງທຶນທີ່ກ່າວໃນປະເພດ(I)ອາດໄດ້ຮັບການປະຕິບັດກ່ອນໂຄງການຈະຖືກສະເໜີຕໍ່ເອດີບີເພື່ອພິຈາລະນາ. ໃນກໍລະນີດັ່ງກ່າວ, ວຽກຂອງທີ່ປຶກສາຈະຈຳກັດຢູ່ແຕ່ໃນປະເພດ (ii)ແລະປະເພດ(iii)ເທົ່ານັ້ນ.

(ຂ) ຖ້າບໍລິສັດທີ່ປຶກສາໄດ້ເຮັດການສຶກສາກ່ອນການລົງທຶນສຳລັບໂຄງການໃດນຶ່ງທີ່ກ່າວໃນປະເພດ(I), ມັນອາດເປັນການໄດ້ປຽບທີ່ຈ້າງບໍລິສັດເກົ່າເພື່ອເຮັດການອອກແບບດ້ານວິສະວະກຳລະອຽດແລະການປະຕິບັດໂຄງການທີ່ກ່າວໃນປະເພດ(ii)ແລະ(iii).

(ຄ) ຕາມທຳມະດາ ມັນມີຄວາມຈຳເປັນທີ່ ຈະແມ່ນບໍລິສັດດຽວກັນທີ່ເປັນ ຜູ້ປະຕິບັດວຽກວິສະວະກຳແລະການອອກແບບລະອຽດທີ່ກ່າວໃນປະເພດ(ii) ແລະການປະຕິບັດໂຄງການທີ່ກ່າວໃນປະເພດ(iii).

## V. ຂັ້ນຕອນສຳລັບການເລືອກບໍລິສັດທີ່ປຶກສາ

### (1) ບົດແນະນຳ

6.01. ນອກຈາກທີ່ຈະກຳນົດໄວ້ເປັນຢ່າງອື່ນໃນປຶ້ມຄູ່ມືນີ້ ແລະນອກຈາກທະນຄານພັດທະນາອາຊີຈະຕົກລົງເປັນຢ່າງອື່ນໃນກໍລະນີສະເພາະ, ຂັ້ນຕອນທີ່ວາງອອກໃນວັກຕ່າງໆຂອງຂໍ້ນີ້ ຕ້ອງໄດ້ຮັບການປະຕິບັດໃນທຸກການຄັດເລືອກບໍລິສັດທີ່ປຶກສາ ໂດຍທະນາຄານພັດທະນາອາຊີ ຫຼືຜູ້ກູ້ຢືມຈາກທະນາຄານ. ໃນເກືອບທຸກກໍລະນີ, ທະນາຄານພັດທະນາອາຊີ ຖືວ່າ ນະໂຍບາຍແລະຂັ້ນຕອນທົ່ວໄປກ່ຽວກັບການວ່າຈ້າງບໍລິສັດທີ່ປຶກສາ ຈະສາມາດເຮັດໄດ້ດີທີ່ສຸດໂດຍຜ່ານການແຂ່ງຂັນໃນລະຫວ່າງບັນດາບໍລິສັດທີ່ຖືກຄັດຈ້ອນແລ້ວ ຊຶ່ງໃນນັ້ນການຄັດເລືອກ ແມ່ນອີງໃສ່ທັງຄຸນນະພາບຂອງເນື້ອໃນການສະເໜີປະມູນແລະມູນຄ່າການບໍລິການທີ່ຈະສະໜອງໃຫ້ (ການເລືອກທີ່ອີງໃສ່ຄຸນນະພາບແລະມູນຄ່າໃຊ້ຈ່າຍ [ເອີ້ນຫຍໍ້ວ່າ QCBS]. QCBS ແມ່ນວິທີການເລືອກບໍລິສັດທີ່ປຶກສາທີ່ ທະນາຄານພັດທະນາອາຊີ ນິຍົມໃຊ້, ແຕ່ຢ່າງໃດກໍຕາມ ໃນບາງກໍລະນີ QCBS ກໍບໍ່ແມ່ນວິທີການຄັດເລືອກທີ່ເໝາະສົມທີ່ສຸດ. ສຳລັບວຽກທີ່ມີຄວາມສັບສົນ ຫຼືວຽກທີ່ໃຊ້ວິຊາສະເພາະສູງ ການເລືອກແມ່ນອີງໃສ່ຄຸນນະພາບຂອງເນື້ອໃນຂອງການສະເໜີປະມູນເທົ່ານັ້ນ ແລະໃນກໍລະນີດັ່ງກ່າວ, ອາດຈະໃຊ້ການຄັດເລືອກທີ່ອີງໃສ່ຄຸນນະພາບ[QBS]. ວິທີການຄັດເລືອກທີ່ຖືກສະເໜີໃຊ້ຈະໄດ້ກຳນົດໄວ້ໃນເອກະສານໂຄງການຂອງທະນາຄານພັດທະນາອາຊີ ແລະຖ້າຫາກມີການສເໜີໃຫ້ໃຊ້ວິທີການຄັດເລືອກບໍລິສັດທີ່ປຶກສາທີ່ອີງໃສ່ຄຸນນະພາບ QBS , ຕ້ອງໄດ້ວ່າຢັ້ງຢືນຄວາມຖືກຕ້ອງໃຫ້ພຽງພໍ.

**(2) ການກຳນົດໜ້າວຽກ**

6.02. (ກ) ກ່ອນຈະລົງມືເຮັດຂັ້ນຕອນການຄັດເລືອກບໍລິສັດທີ່ປຶກສາໃນແຕ່ລະກໍລະນີ, ຕ້ອງໄດ້ມີການກຳນົດ ຈຸດປະສົງແລະຂອບເຂດຂອງວຽກ ແລະໜ້າທີ່ຄວາມຮັບຜິດຊອບທີ່ຈະມອບໃຫ້ທີ່ປຶກສາ ໄວ້ຢ່າງຈະແຈ້ງແລະຄົບຖ້ວນໃນ"ການກຳນົດໜ້າວຽກ". ຕາມທຳມະດາ, ນອກຈາກການກຳນົດໜ້າວຽກແລ້ວ, ຍັງຈະມີຂໍ້ມູນເພີ່ມເຕີມເຊັ່ນສະຫຼຸບຂໍ້ມູນ, ສິ່ງອຳນວຍຄວາມສະດວກແລະການບໍລິການ ທີ່ຜູ້ກູ້ຢືມໃນກໍລະນີເງິນກູ້ ແລະຜູ້ໄດ້ຮັບການຊ່ອຍເຫຼືອໃນກໍລະນີການຊ່ອຍເຫຼືອລ້າດ້ານວິຊາການ ຈະສະໜອງໃຫ້ແກ່ທີ່ປຶກສາ.

(ຂ) ຕາມແຕ່ກໍລະນີ, ທະນາຄານພັດທະນາອາຊີ ແລະຜູ້ກູ້ຢືມຈາກທະນາຄານ ຫຼື ທະນາຄານພັດທະນາອາຊີ ແລະຜູ້ໄດ້ຮັບການຊ່ອຍເຫຼືອ ຕ້ອງມີການປະສານສົມທົບກັນໃນການຮ່າງການກຳນົດໜ້າວຽກແລະຕົກລົງໜ້າວຽກຮ່ວມກັນໃນແຕ່ລະກໍລະນີ.

**(3) "ການຄັດຈ້ອນລາຍຊື່" ຂອງບໍລິສັດທີ່ປຶກສາ**

6.03. (ກ)ການຄັດເລືອກບໍລິສັດທີ່ປຶກສາສຳລັບວຽກງານໃດນຶ່ງໂດຍທົ່ວໄປຈະເລີ້ມຈາກການກະກຽມລາຍຊື່ ບໍລິສັດທີ່ອ້າງວ່າມີຄວາມຊຳນານໃນດ້ານນີ້ ຊຶ່ງມີລາຍຊື່ບໍລິສັດໃນຈຳນວນສົມຄວນ.

(ຂ) ບົນພື້ນຖານຂອງການພິຈາລະນາຢ່າງລະອຽດປະສົບປະການແລະຄວາມສາມາດຂອງບັນດາບໍລິສັດທີ່ຢູ່ໃນລາຍຊື່ເບື້ອງຕົ້ນນັ້ນ, ຈະໄດ້ມີການຄັດຈ້ອນເອົາລາຍຊື່ບໍລິສັດທີ່ຈະເຊີນເຂົ້າຮ່ວມການສະເໜີປະມູນ. ຕາມທຳມະດາການຄັດຈ້ອນບໍລິສັດຈະໃຫ້ເຫຼືອຢູ່ 5-7 ບໍລິສັດທີ່ເຫັນວ່າມີຄຸນນະວຸດແລະມີຄວາມເໝາະສົມທີ່ສຸດ ທີ່ຈະໄດ້ຮັບການເຊື້ອເຊີນໃຫ້ເຂົ້າຮ່ວມການປະມູນ, ບໍລິສັດທີ່ມີລາຍຊື່ໃນບັນຊີຄັດຈ້ອນແລ້ວ ຕ້ອງຕາງໜ້າປະເທດສະມາຊິກຂອງ ທະນາຄານພັດທະນາອາຊີ ໃນລັກສະນະທີ່ມີຄວາມດຸ່ນດ່ຽງພໍສົມຄວນ ໂດຍທີ່ບໍ່ໃຫ້ມີການແບ່ງປັນອັດຕາສ່ວນກັນແບບຕາຍຕົວ.

6.04. ໃນເວລາທີ່ຜູ້ກູ້ຢືມ ສ້າງບັນຊີຄັດຈ້ອນລາຍຊື່ບໍລິສັດທີ່ປຶກສາສຳລັບໂຄງການໃດນຶ່ງທີ່ ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ:

(ກ) ຜູ້ກູ້ຢືມ ອາດສາມາດ ຫາຂ່າວສານຂໍ້ມູນກ່ຽວກັບບໍລິສັດທີ່ມີຄຸນສົມບັດໄດ້ ຈາກສະມາຄົມບໍລິສັດທີ່ປຶກສາ, ສະຖານທູດຂອງບັນດາປະເທດສະມາຊິກຂອງ ທະນາຄານພັດທະນາອາຊີ, ສະຖານທູດຕ່າງໆຂອງຜູ້ກູ້ຢືມເອງ ແລະຈາກ ທະນາຄານພັດທະນາອາຊີ. ໃນເວລາທີ່ທາງ ທະນາຄານພັດທະນາອາຊີໃຫ້ຂໍ້ມູນດັ່ງກ່າວ, ທະນາຄານພັດທະນາອາຊີ ຈະບໍ່ແນະນຳ ຊື່ບໍລິສັດທີ່ປຶກສາໃດນຶ່ງສະເພາະເພື່ອເອົາເຂົ້າໃນບັນຊີຄັດຈ້ອນ.

(ຂ) ຜູ້ກູ້ຢືມຕ້ອງສະເໜີໃຫ້ ທະນາຄານພັດທະນາອາຊີ ລາຍຊື່ບໍລິສັດທີ່ຖືກຄັດຈ້ອນ ກ່ອນທີ່ຈະມີການເຊີນບໍລິສັດເຫຼົ່ານີ້ເຂົ້າຮ່ວມການປະມູນ ເພື່ອໃຫ້ ທະນາຄານພັດທະນາອາຊີ ສາມາດມີຄວາມພຶງພໍໃຈວ່າບໍລິສັດທີ່ຖືກສະເໜີລາຍຊື່ ມີຄຸນສົມບັດທີ່ຈະປະຕິບັດວຽກແລະທາງເລືອກທີ່ກ້ວາງຂວາງສົມຄວນໃນການເລືອທີ່ປຶກສາຈາກປະເທດສະມາຊິກຕ່າງໆ. . ທະນາຄານພັດທະນາອາຊີ ມີສິດໃນການບໍ່ເຫັນດີກັບບໍລິສັດທີ່ຜູ້ກູ້ຢືມເຫັນດີເລືອກແຕ່ຈະງົດຈາກບົ່ງລາຍຊື່ບໍລິສັດໃດນຶ່ງສະເພາະແລະ ບໍ່ໃຫ້ຄຳແນະນຳໃດໆ ນອກຈາກໃນກໍລະນີ ທີ່ວຽກທີ່ຈະເຮັດນັ້ນມີລັກສະນະບໍ່ທຳມະດາແລະພົບວ່າມີພຽງແຕ່ບາງບໍລິສັດພຽງບໍ່ເທົ່າໃດບໍລິສັດທີ່ຈະສາມາດເຮັດວຽກນັ້ນໄດ້.

6.05. ໃນເວລາ ທະນາຄານພັດທະນາອາຊີເປັນຜູ້ເລືອກບໍລິສັດທີ່ປຶກສາເອງສຳລັບໂຄງການຊ່ອຍ

ເຫຼືອລ້າດ້ານວິຊາການ, ລາຍຊື່ບໍລິສັດທີ່ຖືກຄັດຈ້ອນຈະຖືກສົ່ງໃຫ້ອົງການຜູ້ໄດ້ຮັບການຊ່ວຍເຫຼືອ ເພື່ອໃຫ້ມີຄໍາເຫັນ ແລະການຄັດຄ້ານ ກ່ອນທີ່ຈະມີການເຊີນບໍລິສັດເຫຼົ່ານີ້ເຂົ້າສະເໜີປະມູນ.

**(4) ການເຊີນເຂົ້າຮ່ວມສະເໜີປະມູນ**

6.06. ຫຼັງຈາກທີ່ມີການສ້າງບັນຊີຄັດຈ້ອນບໍລິສັດທີ່ປຶກສາໂດຍປະຕິບັດຕາມວັກ 6.03 ຫາ 6.05 ຂອງຂໍ້ນີ້, ຈະມີການເຊີນບໍລິສັດທີ່ມີລາຍຊື່ໃນບັນຊີຄັດຈ້ອນໃຫ້ຍື່ນສະເໜີເອກະສານປະມູນ.

6.07. ເອກະສານ ເຊີນໃຫ້ມີການສະເໜີປະມູນ ຄວນລວມມີ ການກໍານົດໜ້າວຽກ (ເບິ່ງວັກ 6.02 ຂອງຂໍ້ນີ້), ສໍາເນົາຂອງຫຼັກເກນທີ່ ທະນາຄານພັດທະນາອາຊີ ຫຼືຜູ້ກູ້ຢືມ ຈະໃຊ້ເພື່ອປະເມີນເອກະສານສະເໜີປະມູນແລະຂໍ້ມູນເພີ່ມເຕີມອື່ນໆ (ລວມທັງຈໍານວນຄົນ-ເດືອນທີ່ຄາດຄະເນໄວ້) ກ່ຽວກັບວຽກທີ່ສະເໜີ ແລະໃນເງື່ອນໄຂໃດທີ່ຈະໄດ້ປະຕິບັດວຽກ. ໃນເວລາໃຊ້ວິທີການຄັດເລືອກແບບ QCBS,ເອກະສານເຊີນປະມູນຈະແຈ້ງໃຫ້ຊາບວ່າ ນໍ້າໜັກທີ່ໃຫ້ສໍາລັບຄຸນນະພາບດ້ານວິຊາການ(ດ້ານເຕັກນິກ)ແມ່ນ 80 % ແລະນໍ້າໜັກສໍາລັບມູນຄ່າໃຊ້ຈ່າຍແມ່ນ 20%, ແລະ ຄະແນນປະເມີນຄຸນສົມບັດທາງດ້ານເຕັກນິກຕໍ່າສຸດຕ້ອງໄດ້ 75% ຂອງຄະແນນສູງສຸດທີ່ມີສໍາລັບຄຸນນະວຸດທາງດ້ານວິຊາການ.

6.08. ເອກະສານເຊີນປະມູນຕ້ອງໄດ້ບົ່ງຢ່າງຈະແຈ້ງວິທີການຄັດເລືອກທີ່ຈະໃຊ້. ໃນເວລາໃຊ້ວິທີການຄັດເລືອກແບບ QCBS, ບໍລິສັດທີ່ປຶກສາຕ້ອງໄດ້ ຍື່ນຂໍ້ສະເໜີທາງດ້ານວິຊາການແລະຂໍ້ສະເໜີທາງດ້ານການເງິນພ້ອມກັນ ແຕ່ໃຫ້ບັນຈຸໃສ່ໃນຊອງປິດແໜ້ນຊອງໃຜຊອງມັນ.ໃນເວລາໃຊ້ວິທີອີງໃສ່ຄຸນນະພາບ (QBS)ຊຶ່ງຈະບໍ່ອີງໃສ່ລາຄາເປັນຫຼັກເກນຂອງການຄັດເລືອກ, ບໍລິສັດທີ່ປຶກສາຕ້ອງຍື່ນສະເໜີແຕ່ຂໍ່ສະເໜີດ້ານວິຊາການເທົ່ານັ້ນ, ສ່ວນລາຄາຄ່າຈ້າງຈະໄດ້ມີການສົນທະນາແລະຕົກລົງກັນໃນເວລາເຈລະຈາສັນຍາກັບບໍລິສັດທີ່ໄດ້ຮັບການຄັດເລືອກເປັນອັນດັບທີ່ນຶ່ງ.

6.09. ໂດຍເປັນສ່ວນນຶ່ງຂອງການສະເໜີປະມູນ, ບໍລິສັດທີ່ປຶກສາຕ້ອງໄດ້ຍື່ນສະເໜີ (I) ຄາດຄະເນເວລາແລະ ຈໍານວນຄົນ-ເດືອນທີ່ຕ້ອງການ, ທັງໃນສະໜາມແລະໃນຫ້ອງການເພື່ອໃຫ້ປະຕິບັດຕາມການກໍານົດໜ້າວຽກ; ແລະ(ii) ລາຍຊື່ແລະຄຸນນະວຸດຂອງຄົນທີ່ຈະໃຊ້ເຮັດວຽກ. ຕາມທໍາມະດາຈະໃຫ້ເວລາ ຫົກສິບ (60)ມື້ ສໍາລັບການກະກຽມແລະຍື່ນຂໍ້ສະເໜີປະມູນ.

**(5) ການຮັບແລະປະເມີນເອກະສານຍື່ນປະມູນ**

6.10. (ກ) ໃນການຄັດເລືອກທີ່ອີງໃສ່ຄຸນນະພາບແລະລາຄາ, QCBS, ບໍລິສັດທີ່ປຶກສາຕ້ອງໄດ້ ຍື່ນຂໍ້ສະເໜີທາງດ້ານວິຊາການແລະຂໍ້ສະເໜີທາງດ້ານການເງິນພ້ອມກັນ(ເບິ່ງວັກ 6.08). ທຸກໆເອກະສານສະເໜີຍື່ນປະມູນທີ່ໄດ້ຮັບຫຼັງຈາກກໍານົດເວລາປິດການຍື່ນປະມູນແລ້ວຈະຖືກສົ່ງຄືນໃຫ້ເຈົ້າຂອງໂດຍບໍ່ມີການເປີດ ແລະບໍ່ອະນຸຍາດໃຫ້ມີການດັດແປງຂໍ້ສະເໜີທາງດ້ານເຕັກນິກ ຫຼື ຂໍ້ສະເໜີດ້ານການເງິນຫຼັງຈາກໝົດກໍານົດເວລາຂີດຕາຍແລ້ວ. ຄະນະກໍາມະການຄັດເລືອກທີ່ປຶກສາ ຈະເປີດຊອງທີ່ບັນຈຸຂໍ້ສະເໜີທາງດ້ານເຕັກນິກຫຼັງຈາກເວລາປິດການຮັບການຍື່ນສະເໜີປະມູນ. ຊອງທີ່ບັນຈຸຂໍ້ສະເໜີທາງດ້ານການເງິນຈະຍັງຄົງຖືກປິດແລະຮັກສາໄວ້ຢ່າງປອດໄພຈົນກ່ວາຈະມີການເປີດຕໍ່ໜ້າສາທາລະນະ. ໃນກໍລະນີຂອງ ທະນາຄານພັດທະນາ

ອາຊີ, ປະທານຂອງຄະນະກຳມະການຄັດເລືອກທີ່ປຶກສາຈະຮັບຜິດຊອບຕໍ່ການຮັກສາຂໍ້ສະເໜີທີ່ບໍ່ທັນເປີດໄວ້ຢ່າງປອດໄພ. ຂໍ້ສະເໜີທີ່ໄດ້ຮັບຫຼັງຈາກເວລາປິດການຮັບການຍື່ນສະເໜີປະມູນ ຈະຖືກສົ່ງຄືນໂດຍບໍ່ຖືກເປີດ.

(ຂ) ຂໍ້ສະເໜີທາງດ້ານເຕັກນິກທີ່ໄດ້ຮັບຕາມການເຊີນເຂົ້າປະມູນ ຈະໄດ້ຮັບການວິໄຈຢ່າງເອົາໃຈໃສ່ແລະປຽບທຽບກັບແຜນການຂອງວິທີການ, ກຳນົດເວລາ, ປະສົບປະການແລະຄວາມສາມາດຂອງບຸກຄົນທີ່ຈະໃຊ້ເຮັດວຽກ; ຄຸນນະພາບຂອງການກວດກາຊີ້ນຳທີ່ຈະນຳໃຊ້; ການເອົາໃຈໃສ່ທີ່ຫົວໜ້າບໍລິສັດຈະມີໃຫ້; ສິ່ງອຳນວຍຄວາມສະດວກຂອງສຳນັກງານແມ່ຂອງບໍລິສັດແລະການຊ່ອຍເຫຼືອ,ຖ້າມີ, ທີ່ອາດມາຈາກພາກສ່ວນອື່ນໆ.ຄວນຈະໃຫ້ການພິຈາລະນາພໍສົມຄວນຕໍ່ຄວາມຊິນເຄີຍກັບພາສາແລະຮີດຄອງປະເພນີຂອງປະເທດທີ່ຈະປະຕິບັດວຽກ.

(ຄ) ເປົ້າໝາຍຂອງການປະເມີນ ເອກະສານສະເໜີປະມູນຄວນແມ່ນການເລືອກຂໍ້ສະເໜີທາງດ້ານວິຊາການທີ່ເໝາະສົມທີ່ສຸດບົນພື້ນຖານຂອງຄຸນສົມບັດທາງດ້ານເຕັກນິກທີ່ຈະປະຕິບັດວຽກ, ແທນທີ່ຈະອີງໃສ່ບໍລິສັດທີ່ມີຊື່ສຽງທີ່ສຸດ ຫຼືທີ່ມີປະສົບປະການຫຼາຍທີ່ສຸດ. ໃນບັນດາປັດໄຈຕ່າງໆ, ຄວນເໜັ້ນໜັກຕົ້ນຕໍໃສ່ບຸກຄະລາກອນທີ່ຈະໃຊ້ສຳລັບປະຕິບັດວຽກ.

(ງ) ໃນໃຊ້ວິທີການເລືອກແບບ QCBS, ຫຼັງຈາກມີການປະເມີນຂໍ້ສະເໜີທາງດ້ານເຕັກນິກແລ້ວ, ບໍລິສັດທີ່ ຂໍ້ສະເໜີທາງດ້ານເຕັກນິກບໍ່ໄດ້ຮັບຄະແນນຄັດເລືອກຄຸນສົມບັດຮອດຂີດໝາຍຂັ້ນຕ່ຳສຸດ ຫຼືບໍ່ຕອບສະໜອງເງື່ອນໄຂຂອງເອກະສານເຊີນປະມູນແລະການກຳນົດໜ້າວຽກ ຈະໄດ້ຮັບການແຈ້ງໃຫ້ຊາບຫຼັງສຳເລັດຂັ້ນຕອນ ແລະເອກະສານຂໍ້ສະເໜີທາງດ້ານການເງິນຂອງເຂົາເຈົ້າຈະຖືກສົ່ງຄືນໃຫ້ໂດຍບໍ່ໄດ້ເປີດ. ໃນຂະນະດຽວກັນບໍລິສັດທີ່ສາມາດໄດ້ຮັບຄະແນນຄັດເລືອກທາງດ້ານເຕັກນິກຮອດຂີດໝາຍຕ່ຳສຸດກໍຈະຖືກແຈ້ງໃຫ້ຊາບກ່ຽວກັບສະຖານທີ່, ວັນທີ່ແລະເວລາສຳລັບການເປີດຊອງປະມູນທາງດ້ານເງິນ. ຈະມີການແຈ້ງການໃຫ້ມີເວລາພຽງພໍສຳລັບໃຫ້ ທີ່ປຶກສາທີ່ສົນໃຈ ຫຼືຕົວແທນເຂົາເຈົ້າເຂົ້າ ເຂົ້າຮ່ວມໃນການເປີດຊອງປະມູນດ້ານການເງິນ.

(ຈ) ຊອງປະມູນທີ່ບັນຈຸຂໍ້ສະເໜີທາງດ້ານການເງິນທີ່ຍື່ນພາຍໃຕ້ວິທີການ QCBS ຈະຖືກເປີດແບບເປີດເຜີຍຕໍ່ໜ້າສາທາລະນະ ແລະຕົວແທນຂອງບໍລິສັດທີ່ຖືກເລືອກໃຫ້ເຂົ້າຮ່ວມ. ຈະໄດ້ມີການອ່ານແຮງໆ ຊື່ຂອງບໍລິສັດ, ຄະແນນຄຸນນະພາບທາງດ້ານເຕັກນິກ ແລະລາຄາທີ່ສະເໜີແລະຈະມີການບັນທຶກໄວ້ໃນເວລາເປີດຊອງປະມູນດ້ານການເງິນ.

(ຊ)ໃນເວລາໃຊ້ວິທີການຄັດເລືອກແບບ QCBS,ຄະນະກຳມະການຄັດເລືອກທີ່ປຶກສາ ຈະກວດກາຄືນຂໍ້ສະເໜີທາງດ້ານການເງິນ ແລະຈະມີການດັດແປງທຸກຄວາມຜິດພາດໃນການຄິດໄລ່. ເພື່ອປຽບທຽບຂໍ້ສະເໜີຕ່າງໆ, ມູນຄ່າໃຊ້ຈ່າຍຈະຖືກປ່ຽນເປັນ ເງິນຕາສະກຸນດຽວກັນໂດຍໃຊ້ອັດຕາຂາຍຂອງອັດຕາແລກປ່ຽນສຳລັບສະກຸນເງິນຕາຕ່າງໆທີ່ມີການແຈ້ງຢ່າງເປັນທາງການ(ເຊັ່ນຂອງທະນາຄານພັດທະນາອາຊີ ຫຼືທະນາຄານກາງຂອງປະເທດ). ເອກະສານເຊີນປະມູນ ຈະບົ່ງອັດຕາແລກປ່ຽນທີ່ຈະໃຊ້. ສຳລັບຈຸດປະສົງໃນການປຽບທຽບ, "ມູນຄ່າໃຊ້ຈ່າຍ" ຈະບໍ່ນັບພາສີພາຍໃນປະເທດ, ແຕ່ຈະລວມມີທຸກມູນຄ່າໃຊ້ຈ່າຍທີ່ຈະມີໃນການໃຫ້ການບໍລິການ. ຂໍ້ສະເໜີທາງດ້ານການເງິນ ທີ່ມີຄ່າໃຊ້ທີ່ໄດ້ປະເມີນຕ່ຳສຸດ ຈະໄດ້ຮັບຄະແນນທາງດ້ານການເງິນເຕັມ 100 % ແລະຂໍ້ສະເໜີອື່ນໆ ຈະໄດ້ຮັບຄະແນນດ້ານການເງິນທີ່ມີອັດຕາສ່ວນປີ້ນກັນກັບລາຄາທີ່ເຂົາເຈົ້າສະເໜີ.

(ຍ) ສຳລັບວິທີການຄັດເລືອກ ແບບQCBS ຄະແນນລວມຈະໄດ້ຈາກ ການສັ່ງນ້ຳໜັກ ຄະແນນທາງດ້ານເຕັກນິກ ແລະຄະແນນທາງດ້ານການເງິນແລ້ວບວກລວມກັນ (ເບິ່ງວັກ 6.07).

**(6) ການເຈລະຈາສັນຍາ**

6.11. (ກ)ໃນເວລາໃຊ້ວິທີການຄັດເລືອກແບບ QCBS, ການເຈລະຈາຈະລວມທັງການສົນທະນາກ່ຽວກັບ ກຳນົດໜ້າວຽກ, ວິທີການ. ການປະກອບບຸກຄະລາກອນແລະການປະກອບສ່ວນຂອງຜູ້ກູ້ຢືມ. ແຕ່ການສົນທະນາເຫຼົ່ານີ້ຈະບໍ່ປ່ຽນແປງການກຳນົດໜ້າວຽກທີ່ລະບຸໄວ້ໃນເອກະສານເຊີນປະມູນຢ່າງຫຼວງຫຼາຍ. ຈະບໍ່ມີການເຈລະຈາກ່ຽວກັບ ອັດຕາລາຄາຕໍ່ຫົວໜ່ວຍສຳລັບຄ່າຈ້າງຊ່ຽວຊານແລະລາຍຈ່າຍອື່ນໆ, ເພາະວ່າລາຄາຕໍ່ຫົວໜ່ວຍແມ່ນປັດໄຈນຶ່ງທີ່ໃຊ້ໃນຂັ້ນຕອນການຄັດເລືອກ.

(ຂ) ໃນເວລາໃຊ້ວິທີການແບບອີງໃສ່ຄຸນນະພາບ, QBS, ຫຼັງຈາກມີການຄັດເລືອກ ບໍລິສັດ( ບໍລິສັດຕ່າງໆທີ່ເປັນຫຸ້ນສ່ວນກັນ) ທີ່ເຫັນວ່າມີຄຸນສົມບັດທີ່ເໝາະສົມທີ່ສຸດແລ້ວ, ຈະມີການເຈລະຈາເພື່ອຕົກລົງກັນ ກ່ຽວກັບດ້ານການເງິນແລະເງື່ອນໄຂອື່ນໆ ໂດຍບໍ່ມີການຊັກຊ້າ. ໃນການເຈລະຈາສັນຍາ,ອາດເປັນໄປໄດ້ທີ່ຈະພິຈາລະນາຄຳແນະນຳຂອງບໍລິສັດທີ່ຖືກຄັດເລືອກ, ຊຶ່ງມັກຈະເຮັດໃຫ້ມີການດັດແປງຂອບເຂດຂອງວຽກ; ໃນກໍລະນີດັ່ງກ່າວຈະມີການເຈລະຈາກັນຢ່າງມີຄວາມໝາຍກ່ຽວກັບດ້ານການເງິນກໍ່ຕໍ່ເມື່ອມີການຕົກລົງກັນແລ້ວກ່ຽວກັບຂອບເຂດຂອງວຽກ.

(ຄ) ຕົວແທນຂອງບໍລິສັດທີ່ຖືກຄັດເລືອກ ທີ່ຈະເຮັດການເຈລະຈາໃນນາມຂອງບໍລິສັດ ຕ້ອງກຽມພ້ອມທີ່ຈະສົນທະນາກ່ຽວກັບຄາດຄະເນມູນຄ່າໃຊ້ຈ່າຍຂອງໂຄງການແລະຢັ້ງຢືນຄວາມຖືກຕ້ອງຂອງທຸກອົງປະກອບທີ່ກ່ຽວຂ້ອງໄດ້ ແລະຕ້ອງມີສິດໃນການຕົກລົງກ່ຽວກັບການປະມູນ.

(ງ) ຖ້າຫາກວ່າບໍ່ສາມາດຕົກລົງກັນໄດ້, ຕ້ອງໄດ້ຢຸດຕິການເຈລະຈາລົງໂດຍການເຫັນດີຈາກທະນາຄານພັດທະນາອາຊີ ແລະໃຫ້ມີການເປີດເຈລະຈາກັບບໍລິສັດທີ່ມີຄະແນນອັນດັບຖັດມາ (ແລະເຮັດແບບນີ້ເປັນອັນດັບໄປຈົນກ່ວາຈະມີການຕົກລົງລາຄາກັນໄດ້).

6.12. (ກ) ສຳລັບສັນຍາໃຫຍ່ໆສຳລັບໂຄງການຊ່ອຍເຫຼືອດ້ານວິຊາການທີ່ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ ຊຶ່ງທະນາຄານເອງເປັນຜູ້ເລືອກບໍລິສັດທີ່ປຶກສາ, ຄວນມີການເຊີນຕົວແທນຂອງອົງການທີ່ໄດ້ຮັບການຊ່ອຍເຫຼືອເຂົ້າຮ່ວມໃນການເຈລະຈາ.

(ຂ) ໃນກໍລະນີທີ່ຜູ້ກູ້ຢືມເຈລະຈາສັນຍາກັບບໍລິສັດທີ່ປຶກສາ ສຳລັບ ໂຄງການ ທີ່ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ, ດັ່ງທີ່ກຳນົດໄວ້ໃນວັກ 3.02 (ຂ),ທະນາຄານພັດທະນາອາຊີ ຈະໃຫ້ພະນັກງານຕົນເຂົ້າຮ່ວມແລະຊ່ອຍໃນການເຈລະຈາ, ຖ້າຫາກມີການຂໍມາຈາກຜູ້ກູ້ຢືມ.

## (7) ຂັ້ນຕອນການຄັດເລືອກພິເສດ

6.13. ການນຳໃຊ້ຂັ້ນຕອນການຄັດເລືອກທີ່ປຶກສາທີ່ກ່າວມາໃນວັກ 6.03 ເຖິງວັກ 6.12 ຂ້າງເທິງນີ້ອາດຖືກຍົກເລີກໂດຍ ທະນາຄານພັດທະນາອາຊີ ໃນກໍລະນີພະເສດ ຖ້າຫາກມີການຢັ້ງຢືນຢ່າງພຽງພໍ, ເຊັ່ນໃນກໍລະນີທີ່ ອາດເຊີນພຽງແຕ່ບໍລິສັດດຽວ ເຂົ້າຍື່ນປະມູນຍ້ອນວ່າບໍລິສັດດັ່ງກ່າວເຄີຍມີສ່ວນໃນໂຄງການດຽວກັນນີ້ມາກ່ອນ (ເບິ່ງວັກ 5.06 ຂ້າງເທິງ) ຫຼືໃນໂຄງການທີ່ມີການພົວພັນກັນຢ່າງຕິດແໜ້ນ.

## VI. ສຳເນົາປະຫວັດບໍລິສັດທີ່ປຶກສາແລະບຸກຄົນທີ່ປຶກສາ ຂອງ ທະນາຄານພັດທະນາອາຊີ

7.01. ທະນາຄານພັດທະນາອາຊີ ໄດ້ຮັກສາສຳເນົາປະຫວັດ ຂໍ້ມູນກ່ຽວກັບຄວາມສາມາດແລະປະສົບປະການ ຂອງບໍລິສັດແລະບຸກຄົນທີ່ປຶກສາຈຳນວນຫຼວງຫຼາຍທີ່ເຄີຍສົ່ງໃຫ້ ທະນາຄານພັດທະນາອາຊີ. ທະນາຄານພັດທະນາອາຊີໄດ້ໃຊ້ຂ່າວສານເຫຼົ່ານີ້ ໃນການຄັດເລືອກບໍລິສັດທີ່ປຶກສາ ຫຼື ທີ່ປຶກສາ (ເບິ່ງວັກ 2.01 ຂ້າງເທິງ). ທະນາຄານພັດທະນາອາຊີ ຍັງໃຊ້ຂໍ້ມູນເຫຼົ່ານີ້ເພື່ອປະເມີນຄວາມສາມາດຍອມຮັບເອົາໄດ້ ຂອງບໍລິສັດຫຼືບຸກຄົນທີ່ປຶກສາທີ່ ຜູ້ກູ້ສະເໜີຫຼືເລືອກມາ (ເບິ່ງວັກ 3.02 ຂ້າງເທິງ).

7.02. ຄວາມຈິງແລ້ວການທີ່ທາງ ທະນາຄານພັດທະນາອາຊີ ໄດ້ຮັບການສະໜອງຂໍ້ມູນກ່ຽວກັບບໍລິສັດຫຼືບຸກຄົນນັ້ນ ບໍ່ໝາຍຄວາມວ່າ ທະນາຄານພັດທະນາອາຊີ ຈະຈ້າງບໍລິສັດຫຼືບຸກຄົນນັ້ນ ສຳລັບວຽກທີ່ພົວພັນກັບ ທະນາຄານພັດທະນາອາຊີ ຫຼື ບໍ່ໝາຍຄວາມວ່າ ທະນາຄານພັດທະນາອາຊີ ຈະອະນຸມັດການວ່າແຕ່ງຕັ້ງບໍລິສັດຫຼືບຸກຄົນນັ້ນ ສຳລັບໂຄງການໃດນຶ່ງ. ເວົ້າອີກແບບນຶ່ງກໍຄື ທະນາຄານພັດທະນາອາຊີ ບໍ່ມີບັນຊີ ຂອງບໍລິສັດທີ່ປຶກສາ ຫຼືຂອງບຸກຄົນທີ່ຜ່ານການເຫັນດີແລ້ວ.

## VIII. ບຸກຄົນທີ່ປຶກສາ

### (1) ປະເພດໜ້າທີ່

8.01. ທະນາຄານພັດທະນາອາຊີ ຫຼື ຜູ້ກູ້ຢືມທະນາຄານໂດຍທົ່ວໄປມັກ ຈະວ່າຈ້າງ ບຸກຄົນທີ່ປຶກສາ [1]ເພື່ອປະຕິບັດວຽກດັ່ງຕໍ່ໄປນີ້:

(i). ເພື່ອສ້າງ, ກວດກາຄືນ, ເພີ່ມເຕີມ ຫຼື ປັບປຸງ ການສຶກສາຄວາມສາມາດເປັນໄປໄດ້ (ພາສາທົ່ວໄປເອີ້ນວ່າບົດວິພາກເສດຖະກິດເຕັກນິກ).

(ii) ເພື່ອຊ່ອຍປະເທດສະມາຊິກກຳລັງພັດທະນາຂອງ ທະນາຄານພັດທະນາອາຊີ ສ້າງຕັ້ງຫຼືສ້າງຄວາມເຂັ້ມແຂງທາງດ້ານສະຖາບັນ. ເພື່ອປະຕິບັດການສຶກສາຂະແໜງການ ຫຼືເພື່ອສ້າງແຜນການພັດທະນາ.

(iii)ເພື່ອຊ່ອຍພະນັກງານຂອງ ທະນາຄານພັດທະນາອາຊີ ປະຕິບັດບາງໜ້າທີ່ຫຼືເພື່ອໃຫ້ການບໍລິການພິເສດແກ່ ທະນາຄານພັດທະນາອາຊີ.

(iv) ເພື່ອຊ່ອຍຜູ້ກູ້ຢືໃນການປະຕິບັດໂຄງການ.

### (2) ຂັ້ນຕອນການຄັດເລືອກ

8.02. ນອກຈາກທີ່ທາງ ທະນາຄານພັດທະນາອາຊີ ຈະຕົກລົງເປັນຢ່າງອື່ນໃນກໍລະນີສະເພາະ, ຂັ້ນຕອນທີ່ບົ່ງໃນວັກຕໍ່ໆໄປຂອງຂໍ້ນີ້ ຈະຖືກນຳໃຊ້ໃນການຄັດເລືອກບຸກຄົນທີ່ປຶກສາ ໂດຍ ທະນາຄານພັດທະນາອາຊີ ຫຼືຜູ້ກູ້ຢືມຂອງ ທະນາຄານພັດທະນາອາຊີ.

---

[1] ເພື່ອໃຫ້ຮູ້ຄວາມແຕກຕ່າງລະຫວ່າງ"ບຸກຄົນທີ່ປຶກສາ" ແລະ"ບໍລິສັດທີ່ປຶກສາ" ເພື່ອຈຸດປະສົງຂອງປຶ້ມຄູ່ມືສະບັບນີ້, ໃຫ້ເບິ່ງວັກ 1.03 ຂ້າງເທິງນີ້.

8,03. ຂັ້ນຕອນສຳລັບການເລືອກທີ່ປຶກສາທີ່ເປັນບຸກຄົນ ແມ່ນງ່າຍດາຍກ່ວາການເລືອກບໍລິສັດທີ່ປຶກສາ (ຊຶ່ງບົ່ງໄວ້ໃນວັກ 6.01 - 6.13 ຂ້າງເທິງນັ້ນ) ຢ່າງໃດກໍຕາມ, ຂໍ້ກຳນົດໃນວັກ 6.02. ກ່ຽວກັບການຮ່າງກຳນົດໜ້າວຽກສຳລັບບໍລິສັດທີ່ປຶກສາ ແມ່ນມີຜົນໃຊ້ໄດ້ຄືກັນໃນກໍລະນີບຸກຄົນທີ່ປຶກສາ ໃນການຄັດເລືອກແລະວ່າຈ້າງເຂົາເຈົ້າ.

8.04. ໃນການເລືອກແລະວ່າຈ້າງບຸກຄົນທີ່ປຶກສາ, ຕ້ອງໄດ້ເອົາໃຈໃສ່ນະໂຍບາຍຂອງ ທະນາຄານພັດທະນາອາຊີ ພໍສົມຄວນໃນການສົ່ງເສີມ ໃຫ້ມີການນຳໃຊ້ທີ່ປຶກສາພາຍໃນປະເທດ ແລະທີ່ປຶກສາຈາກປະເທດສະມາຊິກກຳລັງພັດທະນາອື່ນໆ ຂອງ ທະນາຄານພັດທະນາອາຊີ, ດັ່ງທີ່ກຳນົດໄວ້ໃນວັກ 4.01 - 4.03 ຂ້າງເທິງນັ້ນ.

8.05. ອາດຈະມີການວ່າຈ້າງບຸກຄົນທີ່ປຶກສາໂດຍກົງຫຼືຜ່ານການຈັດຕັ້ງໃດນຶ່ງ, ເຊັ່ນ ສະຖາບັນການສຶກສາ, ອົງການຂອງລັດຖະບານ ຫຼືອົງການຈັດຕັ້ງສາກົນ ຫຼືບໍລິສັດທີ່ປຶກສາ.

8.06. ສຳລັບການຄັດເລືອກບຸກຄົນທີ່ປຶກສາ, ຈະຕ້ອງໄດ້ສ້າງບັນຊີລາຍຊື່ບຸກຄົນທີ່ມີຄວາມເໝາະສົມທີ່ມາຈາກປະເທດສະມາຊິກຂອງ ທະນາຄານພັດທະນາອາຊີ ໃນຈຳນວນທີ່ເໝາະສົມ ໂດຍໃຊ້ແຫຼ່ງຂໍ້ມູນເທົ່າທີ່ມີຢູ່. ຈາກນັ້ນກໍຕິດຕໍ່ບຸກຄົນທີ່ຄັດເລືອກເອົາ ເພື່ອສອບຖາມຄວາມສົນໃຈ ແລະການມີເວລາຂອງເຂົາເຈົ້າທີ່ຈະເຮັດວຽກທີ່ສະເໜີ. ຕ້ອງໄດ້ຈັດລຳດັບ ບຸກຄົນທີ່ສາມາດຈະເຮັດວຽກໄດ້ ໂດຍອີງໃສ່ຄຸນນະວຸດແລະປະສົບປະການຂອງເຂົາເຈົ້າເປັນຕົ້ນຕໍ ແລະຕໍ່ຈາກນັ້ນກໍເຈລະຈາສັນຍາ ກັບຜູ້ທີ່ໄດ້ອັນດັບທີ່ນຶ່ງ. ຖ້າບໍ່ສາມາດຕົກລົງກັບຜູ້ທີ່ໄດ້ອັນດັບທີ່ນຶ່ງແລ້ວ ກໍໃຫ້ຕິດຕໍ່ຫາຜູ້ໄດ້ອັນດັບທີ່ສອງ (ແລະເຮັດແບບນີ້ຕໍ່ໆໄປຈົນກ່ວາຈະມີການຕົກລົງສັນຍາກັນໄດ້).

8.07 (ກ) ໃນເວລາ ທະນາຄານພັດທະນາອາຊີ ຄັດເລືອກບຸກຄົນທີ່ປຶກສາ ສຳລັບໂຄງການຊ່ວຍເຫຼືອດ້ານວິຊາການ, ຈະມີການສົ່ງຊື່ຂອງທີ່ປຶກສາພ້ອມດ້ວຍຄຸນນະວຸດຂອງເຂົາເຈົ້າ ໄປໃຫ້ອົງການທີ່ໄດ້ຮັບການຊ່ວຍເຫຼືອ ເພື່ອຄວາມເຫັນພ້ອມນຳ.

(ຂ) ໃນເວລາຜູ້ກູ້ຢືມຄັດເລືອກບຸກຄົນທີ່ປຶກສາສຳລັບໂຄງການທີ່ໄດ້ຮັບທຶນຈາກ ທະນາຄານພັດທະນາອາຊີ, ຈະຕ້ອງມີການສົ່ງຊື່ຂອງທີ່ປຶກສາພ້ອມດ້ວຍຄຸນນະວຸດຂອງເຂົາເຈົ້າ ໄປໃຫ້ ທະນາຄານພັດທະນາອາຊີ ເພື່ອຄວາມເຫັນພ້ອມນຳ.

## IX. ຂໍ້ກຳນົດ ອື່ນໆ

**(1) ເວລາ ທີ່ໃຊ້ ສຳລັບການຄັດເລືອກ ແລະ ຮັບເອົາທີ່ປຶກສາ**

9.01. ມັນມີຄວາມສຳຄັນທີ່ຈະເລືອກ ແລະວ່າຈ້າງທີ່ປຶກສາສຳລັບໂຄງການໃຫ້ໄດ້ໄວ ເພື່ອໃຫ້ໂຄງການສາມາດປະຕິບັດໄດ້ຕາມກຳນົດເວລາທີ່ໄດ້ຕົກລົງໄວ້. ການຊັກຊ້າໃນການໃຊ້ທີ່ປຶກສາເຮັດວຽກມັກຈະມີຜົນຕໍ່ການປະຕິບັດໂຄງການໃຫ້ທັນເວລາ.

9.02. ເວລາທີ່ໃຊ້ສໍາລັບການຮັບເອົາທີ່ປຶກສາສາມາດເຮັດໃຫ້ສັ້ນເຂົ້າໄດ້ ຖ້າຫາກມີການກະກຽມ(ລວມທັງການຂຽນກໍານົດໜ້າວຽກ ແລະລາຍຊື່ ທີ່ປຶກສາທີ່ມີຄຸນສົມບັດພໍ) ທຸກຢ່າງຮຽບຮ້ອຍໃນຕອນຕົ້ນຫຼັງຈາກການປະເມີນໂຄງການສິ້ນສຸດລົງ, ເພື່ອໃຫ້ສາມາດລົງມື ຄັດເລືອກແລະຮັບເອົາທີ່ປຶກສາໄດ້ເລີຍຫຼັງຈາກໂຄງການດັ່ງກ່າວໄດ້ຮັບການຮັບອະນຸມັດຈາກ ທະນາຄານພັດທະນາອາຊີ (ດັ່ງທີ່ໄດ້ບົ່ງໄວ້ໃນປະໂຫຍກທໍາອິດຂອງວັກ9.03 ຂ້າງລຸ່ມນີ້).

9.03. ການເຊີນເຂົ້າສະເໜີປະມູນໃນກໍລະນີຂອງບໍລິສັດທີ່ປຶກສາ (ເບິ່ງວັກ 6.06 -6.09 ຂ້າງເທິງ) ແລະການສອບຖາມກ່ຽວກັບຄວາມເປັນໄປໄດ້ໃນການວ່າຈ້າງ ໃນກໍລະນີຂອງບຸກຄົນທີ່ປຶກສາ ຕ້ອງໄດ້ຖືກສົ່ງອອກໄປທັນທີຫຼັງຈາກທີ່ໂຄງການກ່ຽວຂ້ອງໄດ້ຮັບການອະນຸມັດຈາກ ທະນາຄານພັດທະນາອາຊີ. ຢ່າງໃດກໍຕາມ, ໃນກໍລະນີພິເສດທີ່ມີການຢັ້ງຢືນພຽງພໍ ວ່າມີຄວາມຈໍາເປັນ, ກໍສາມາດການດໍາເນີນການຄັດເລືອກແລະຮັບເອົາທີ່ປຶກສາໄດ້ ລ່ວງໜ້າກ່ອນການອະນຸມັດໂຄງການເພື່ອໃຫ້ສາມາດປະຕິບັດໂຄງການໄດ້ ທັນເວລາ, ແຕ່ການຄັດເລືອກແລະຮັບເອົາທີ່ປຶກສາລ່ວງໜ້າ ດັ່ງກ່າວຕ້ອງໄດ້ຮັບການອະນຸມັດຕ່າງຫາກ ຈາກ ທະນາຄານພັດທະນາອາຊີ. ການທີ່ທາງ ທະນາຄານພັດທະນາອາຊີ ອະນຸມັດໃຫ້ມີການຄັດເລືອກແລະຮັບເອົາທີ່ປຶກສາລ່ວງໜ້າແນວນັ້ນ ບໍ່ໝາຍຄວາມວ່າຈະແມ່ນຄໍາໝັ້ນສັນຍາຂອງທະນາຄານພັດທະນາອາຊີວ່າຕ້ອງອະນຸມັດໂຄງການໃນເວລາຕໍ່ມາ.

9.04. ໃນກໍລະນີທີ່ ຜູ້ກູ້ຢືມຈະວ່າຈ້າງ ບໍລິສັດທີ່ປຶກສາ ໂດຍກົງ ໂດຍປະຕິບັດຕາມຂໍ້ກໍານົດ ຂອງວັກ 5.06 ແລະ 6.13 ຂ້າງເທິງ, ຕາມທໍາມະດາຜູ້ກູ້ຢືມ ຕ້ອງໄດ້ສໍາເລັດການເຈລະຈາສັນຍາກັບບໍລິສັດພາຍໃນກໍານົດ 90 ວັນຫຼັງຈາກວັນທີເຊັນສັນຍາເງິນກູ້.

**(2) ຂໍ້ສະເໜີແນະ ຂອງທີ່ປຶກສາ**

9.05. ໃນກໍລະນີທີ່ຜູ້ກູ້ຢືມ, ຫຼັງຈາກການພິຈາລະນາຂໍ້ສະເໜີ ຫຼືຄໍາແນະນໍາ ຂອງທີ່ປຶກສາຢ່າງສົມເຫດສົມຜົນແລ້ວ. ເຫັນວ່າມີຄວາມຈໍາເປັນຈະຕ້ອງປ່ຽນຈາກ ຫຼື ທີ່ຈະຕ້ອງຍອມຮັບໂດຍທີ່ບໍ່ຕ້ອງມີການ ປຶກສາ, ຂໍ້ສະເໜີແນະ ຫຼືຄໍາແນະນໍາດັ່ງກ່າວ, ຜູ້ກູ້ຢືມຕ້ອງຮັບປະກັນໃຫ້ໄດ້ຮັບການເຫັນດີຈາກ ທະນາຄານພັດທະນາອາຊີວ່າບໍ່ຂັດຂ້ອງຕໍ່ມາດຕະການທີ່ສະເໜີມາ. ໃນກໍລະນີດັ່ງກ່າວ, ທາງ ທະນາຄານພັດທະນາອາຊີ ຈະຂໍຄໍາເຫັນຈາກທີ່ປຶກສາ, ຕາມທໍາມະດາແລ້ວກໍແມ່ນໂດຍຜ່ານຜູ້ກູ້ຢືມ, ກ່ອນທີ່ຈະຕັດສິນໃຈວ່າຈະເຫັນດີຫຼືບໍ່ເຫັນດີ.

**(3) ການຢຸດຕິສັນຍາ**

9.06. ໃນກໍລະນີທີ່ສັນຍາທີ່ມີໃນປະຈຸບັນກັບທີ່ປຶກສາ ຕ້ອງມີການຢຸດຕິລົງກ່ອນທີ່ຈະສໍາເລັດວຽກ, ທະນາຄານພັດທະນາອາຊີ ຈະພິຈາລະນາ ຂັ້ນຕອນສໍາລັບການຫາທີ່ປຶກສາມາແທນ ເປັນແຕ່ລະກໍລະນີໄປ, ໂດຍຈະຄໍານຶງເຖິງຄໍາເຫັນຂອງຜູ້ກູ້ຢືມໃນກໍລະນີຂອງໂຄງການທຶນກູ້ຢືມ.